# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ ............................................ 1

II. ການເຄື່ອນໄຫວວຽກງານ ຂອງການນຳຂັ້ນສູງ ແລະ ຄະນະນຳ ຄຕພ................................................ 8

III. ການເຄື່ອໄຫວວຽກງານ ຂອງສາມອົງການຈັດຕັ້ງມະຫາຊົນ ຄຕພ ................................................11


ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ

ປະຈຳເດືອນ ກຸມພາ 2024


ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ

Tel : 021 414046, Email: Ri.dept.la@Gmail.com, Website: www.cerccp.org.la

## I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ

### 1. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງຕ່າງປະເທດ

#### 1) ພັກກອມມູນິດຫວຽດນາມ

ວັນທີ 7 ກຸມພາ 2024, ສະຫາຍ ເລຂາທິການໃຫຍ່ ຫງວຽນຝູ້ຈ້ອງ ໄດ້ອວຍພອນປີໃໝ່ຫວຽດນາມ ປີ 2024 ມີເນື້ອໃນບາງຕອນສຳຄັນ ໃຫ້ທົ່ວພັກ, ທົ່ວປວງຊົນ, ກອງທັບເພີ່ມທະວີຄວາມສາມັກຄີ, ມີຄວາມຮັບຜິດຊອບຕັດສິນໃຈສູງກວ່າເກົ່າ, ເພີ່ມທະວີການຮ່ວມມື, ເປັນເອກະພາບ, ເສີມຂະຫຍາຍນໍ້າໃຈຮັກຊາດ, ຄວາມກ້າຫານ ແລະ ປະດິດສ້າງຂອງຫວຽດນາມ; ຮັກສາວັດທະນະທຳ ແລະ ປະເພນີອັນດີງາມຂອງຊາດ. ເດັດດ່ຽວຜ່ານຜ່າຄວາມຫຍຸ້ງຍາກ; ປ່ຽນຈາກສິ່ງທ້າທາຍ ໃຫ້ເປັນໂອກາດອັນຍິ່ງໃຫຍ່ໄປສູ່ຜົນໄດ້ຮັບທີ່ແທ້ຈິງ.

ວັນທີ 23 ກຸມພາ 2024, ກອງປະຊຸມ ອະນຸກຳມະການກະກຽມກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ 14 ຂອງພັກກອມມູນິດຫວຽດນາມ, ທີ່ຈະຈັດຂຶ້ນໃນເດືອນ ມັງກອນ ປີ 2026, ສະຫາຍ ເລຂາທິການໃຫຍ່ ຫງວຽນຝູ້ຈ້ອງ ໄດ້ກ່າວວ່າ: ກອງປະຊຸມໃຫຍ່ ຄັ້ງທີ 14 ຈະກວດກາຄືນການປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ 13 ຂອງພັກ ແລະ 40 ປີ ໃນການປະຕິບັດແນວທາງປ່ຽນແປງໃໝ່ (Doi Moi) ແລະ ຈະສືບຕໍ່ປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໄລຍະ 2021-2030 ໃຫ້ສຳເລັດຜົນ; ບົດລາຍງານການເມືອງ ຕ້ອງດຳເນີນໄປຢ່າງມີວິທະຍາສາດ, ໜັກແໜ້ນ ແລະ ມີຫົວຄິດປະດິດສ້າງ ຮັບປະກັນຄຸນນະພາບ; ຮຽກຮ້ອງໃຫ້ບັນດາຄະນະອະນຸກຳມະການ, ຕ້ອງເອກະພາບກ່ຽວກັບທິດທາງ ແລະ ວິທີການເພື່ອບັນລຸປະສິດທິຜົນສູງສຸດ, ລົບຫຼີກລະຫວ່າງການຄົ້ນຄວ້າທິດສະດີກັບການປະຕິບັດຕົວຈິງໃນທຸກຂົງເຂດ.

ວັນທີ 27 ກຸມພາ 2024, ສອງກະຊວງປ້ອງກັນປະເທດ ຫວຽດນາມ ແລະ ຍີ່ປຸ່ນ ພົບປະ ຄັ້ງທີ 10 ຢູ່ຮ່າໂນ້ຍ ສອງຝ່າຍເຫັນດີເພີ່ມທະວີການແລກປ່ຽນຄະນະຜູ້ແທນທຸກຂັ້ນ ແລະ ເຣັດວຽກໃນຂົງເຂດສຶກສາ-ບຳລຸງສ້າງ ອຸດສາຫະກຳປ້ອງກັນຊາດ, ການແພດທະຫານ, ຄວາມປອດໄພທາງອິນເຕີເນັດ, ກອງທັບເຮືອ, ປ້ອງກັນຄວາມສະຫງົບ ການຄົ້ນຫາ ແລະ ກູ້ໄພ, ການຮັກສາສັນຕິພາບ, ການຟື້ນຟູຫຼັງສົງຄາມ. 30 ມັງກອນ ຜ່ານມາ, ຫວຽດນາມ-ຟີລິບປິນ ເຫັນດີ ເພີ່ມທະວີການຮ່ວມມືດ້ານການເມືອງ ແລະ ການທູດ, ປະຕິບັດຍຸດທະສາດການຮ່ວມມື ໄລຍະ 2025-2030; ເພີ່ມທະວີການຮ່ວມມືດ້ານເສດຖະກິດ ໃຫ້ບັນລຸ 10 ຕື້ USD ໃນປີ 2024; ຈະຮ່ວມມືແກ້ໄຂບັນຫາສິ່ງແວດລ້ອມ; ການຮ່ວມມືດ້ານການຄ້າເຂົ້າ; ປ້ອງກັນຄວາມສະຫງົບ, ປ້ອງກັນປະເທດ; ການຮ່ວມມືທາງທະເລ; ຕ້ານອາດຊະຍາກຳຂ້າມຊາດ ແລະ ດ້ານເຕັກໂນໂລຊີສູງ ແລະ ຂົງເຂດອື່ນໆ. ນອກນັ້ນ, ສອງຝ່າຍ ເຫັນດີສະໜັບສະໜູນ ສປປ.ລາວ ໃນການເປັນປະທານອາຊຽນ 2024 ແລະ ຮັກສາຄວາມສາມັກຄີໃນອາຊຽນ ແລະ ຟີລິບປິນ ຈະສະໜັບສະໜູນຫວຽດນາມ ເພື່ອເປັນເຈົ້າພາບຈັດຕັ້ງກອງປະຊຸມ APEC ປີ 2027.

#### 2) ພັກກອມມູນິດຈີນ

ວັນທີ 03 ກຸມພາ 2024, ສູນກາງພັກກອມມູນິດຈີນ ໄດ້ເຜີຍແຜ່ເອກະສານໝາຍເລກໜຶ່ງ ປະຈຳປີ 2024 ພາຍໃຕ້ຫົວຂໍ້ ‘‘ຄວາມຄິດເຫັນຂອງສູນກາງພັກກອມມູນິດຈີນ ແລະ ລັດຖະບານຈີນ ກ່ຽວກັບການຮຽນຮູ້ ແລະ ນຳໃຊ້ບົດຮຽນຂອງໂຄງການ ‘ໜຶ່ງພັນບ້ານຕົວແບບ, ໜຶ່ງໝື່ນບ້ານປັບປຸງ’ ’’ ຊຶ່ງປະກອບມີ 06 ດ້ານຄື: ຮັບປະກັນຄວາມໝັ້ນຄົງທາງດ້ານສະບຽງອາຫານ; ລຶບລ້າງຄວາມທຸກຍາກ; ຍົກລະດັບການພັດທະນາອຸດສາຫະກຳຢູ່ຊົນນະບົດ; ເພີ່ມທະວີການກໍ່ສ້າງຊົນນະບົດ; ຍົກລະດັບການຄຸ້ມຄອງຢູ່ຊົນນະບົດ ແລະ ເພີ່ມທະວີການນຳພາຢ່າງຮອບດ້ານຂອງພັກຕໍ່ວຽກງານກະສິກຳຢູ່ຊົນນະບົດ ແລະ ໃນວັນທີ 19 ກຸມພາ 2024, ຄະນະກຳມະການສູນກາງພັກກອມມູນິດຈີນ ໄດ້ເຜີຍ

ແຜ່ຂໍ້ກຳນົດກ່ຽວກັບການສຶກສາປະຫວັດສາດຂອງພັກ ເພື່ອຊຸກຍູ້ໃຫ້ທົ່ວພັກ ແລະ ສັງຄົມ ກໍາໄດ້ປະຫວັດສາດຂອງພັກ, ຊຶ່ງລວມມີ 6 ບົດ ແລະ 34 ມາດຕາ, ເອກະສານດັ່ງກ່າວໄດ້ຍົກເອົາບັນດາຫຼັກການລວມ, ໂຄງປະກອບການນໍາພາ, ຄວາມຮັບຜິດຊອບ, ເນື້ອໃນ, ວິທີການຄົ້ນຄວ້າປະຫວັດສາດຂອງພັກ. ມີ 4 ຈຸດປະສົງຫຼັກຂອງໂຄງການສຶກສາປະຫວັດສາດພັກຄື: ເພີ່ມທະວີຄວາມເຂົ້າໃຈຢ່າງຖືກຕ້ອງກ່ຽວກັບທ່າອ່ຽງທີ່ເປັນມູນເຊື້ອ, ກໍານົດລັກສະນະປະຫວັດສາດຂອງພັກກອມມູນິດຈີນ; ຄວາມເຊື່ອໝັ້ນ; ຄວາມເດັດດ່ຽວ ແລະ ຄວາມດຸໝັ້ນ.

ວັນທີ 8 ກຸມພາ 2024, ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່ ພັກກອມມູນິດຈີນ ໄດ້ກ່າວວ່າ ໃນການປະຕິບັດມະຕິ ຄັ້ງທີ 20 ຂອງພັກໃນທຸກດ້ານ ໂດຍປະເຊີນໜ້າກັບສະພາບສາກົນທີ່ຜັນແປຢ່າງສັບສົນ ແລະ ວຽກງານທີ່ຫຍຸ້ງຍາກໃນການປະຕິຮູບ, ການພັດທະນາ ແລະ ການຮັກສາສະຖຽນລະພາບ, ຈີນໄດ້ເຕົ້າໂຮມນໍ້າໃຈ ຜ່ານຜ່າຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍຫຼາຍປະການ ແລະ ໄດ້ກ້າວໄປຂ້າງໜ້າຢ່າງແຂງແຮງ ເພື່ອສ້າງປະເທດຈີນໃຫ້ກາຍເປັນປະເທດສັງຄົມນິຍົມທີ່ທັນສະໄໝໃນທຸກດ້ານ. ຍອດຜະລິດຕະພັນດ້ານເສດຖະກິດໄດ້ຫຼາຍກວ່າ 126 ພັນຕື້ຢວນ ໃນປີ 2023 ແລະ ລະດັບວຽກເຮັດງານທໍາມີຄວາມໝັ້ນທ່ຽງ, ມີບາດກ້າວບຸກທະລຸໃໝ່ໃນດ້ານວິທະຍາສາດ-ເຕັກໂນໂລຢີ, ກໍາລັງຜະລິດຕະພັນໃໝ່ຂະຫຍາຍຕົວຢ່າງວ່ອງໄວ, ການປະຕິຮູບໃໝ່ຂອງພັກ ແລະ ບັນດາອົງການລັດໄດ້ສໍາເລັດໂດຍພື້ນຖານ, ການປ້ອງກັນປະເທດ ແລະ ກໍາລັງປະກອບອາວຸດ ມີຄວາມກ້າວໜ້າອັນໃຫຍ່ຫຼວງ. ພັກມີການເຄື່ອນໄຫວຢ່າງຕັ້ງໜ້າ, ຄົບຖ້ວນ ແລະ ເຂັ້ມງວດ ແລະ ຕ້ານການສໍ້ລາດບັງຫຼວງ, ເອົາໃຈໃສ່ປະຊາຊົນເປັນອັນດັບໜຶ່ງ ຮັບປະກັນ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ, ສືບຕໍ່ຮັດແໜ້ນ ແລະ ຜັນຂະຫຍາຍບັນດາຜົນງານທີ່ບັນລຸໄດ້ໃນການແກ້ໄຂຄວາມທຸກຍາກ, ຄັດຄ້ານການແບ່ງແຍກດິນແດນຢ່າງເດັດດ່ຽວເພື່ອ "ເອກະລາດໄຕ້ຫວັນ" ແລະ ການແຊກແຊງຈາກກໍາລັງພາຍນອກ, ປົກປັກຮັກສາສິດອະທິປະໄຕ, ຄວາມໝັ້ນຄົງ ແລະ ຜົນປະໂຫຍດຂອງຈີນ ແລະ ການສ້າງຊາຕາກໍາຮ່ວມກັນຂອງມວນມະນຸດຊາດ. **ໃນມື້ດຽວກັນ**, ສະຫາຍ ໄດ້ສົນທະນາກັບ ສະຫາຍ ວະລາດີເມຍ ປູຕິນ, ປະທານາທິບໍດີລັດເຊຍ ຜ່ານທາງໂທລະສັບ ໄດ້ປຶກສາຫາລື ກ່ຽວກັບສາຍພົວພັນ ລະຫວ່າງ ຈີນ-ລັດເຊຍ ເພີ່ມທະວີຄວາມສາມັກຄີ ແລະ ຄວາມໄວ້ເນື້ອເຊື່ອໃຈກັນ, ປົກປັກຮັກສາຄວາມໝັ້ນຄົງ ແລະ ສະຖຽນລະພາບໃນພາກພື້ນການຮ່ວມມືຊຽງໄຮ້ ປີ 2024, ສົ່ງເສີມໂລກໃຫ້ຫັນເປັນຫຼາຍຂົ້ວທີ່ສະເໝີພາບ ແລະ ເປັນລະບຽບ, ເສດຖະກິດໂລກາພິວັດທີ່ຊຸກຍູ້ການສ້າງປະຊາຄົມຮ່ວມຊາຕາກໍາຂອງມວນມະນຸດ ແລະ ອື່ນໆ.

ວັນທີ 23 ກຸມພາ 2024, ສະຫາຍ ສີຈິ້ນຜິງ ໄດ້ເປັນປະທານກອງປະຊຸມ ຄັ້ງທີ 4 ຂອງຄະນະກໍາມະການການເງິນ ແລະ ເສດຖະກິດສູນກາງຈີນ ໂດຍເນັ້ນໜັກບາງຕອນວ່າ: ການເລັ່ງລັດການປ່ຽນລຸ້ນໃໝ່ຂອງຜະລິດຕະພັນແມ່ນມາດຕະການສໍາຄັນໃນການຊຸກຍູ້ການພັດທະນາດ້ວຍຄຸນນະພາບສູງ, ຕ້ອງສົ່ງເສີມ ແລະ ຊີ້ນໍາໃຫ້ມີການຍົກລະດັບອຸປະກອນຂະໜາດໃຫຍ່ຮອບໃໝ່ ແລະ ການແລກປ່ຽນເອົາເຄື່ອງບໍລິໂພກແບບໃໝ່. ການຈໍລະຈອນສິນຄ້າແມ່ນເສັ້ນເອັນຂອງເສດຖະກິດຮູບປະທໍາ, ສາມາດເຊື່ອມຕໍ່ການຜະລິດ ແລະ ການບໍລິໂພກ, ການຄ້າພາຍໃນ ແລະ ການຄ້າກັບຕ່າງປະເທດໄດ້, ຕ້ອງຫຼຸດຕົ້ນທຶນດ້ານການຈໍລະຈອນສິນຄ້າທົ່ວສັງຄົມໃຫ້ຕໍ່າລົງຢ່າງມີປະສິດທິຜົນເພີ່ມທະວີກໍາລັງແຂ່ງຂັນເປັນແກນກາງຂອງອຸດສາຫະກໍາ, ຍົກປະສິດທິພາບຂອງການໝູນວຽນດ້ານເສດຖະກິດໃຫ້ສູງຂຶ້ນ.

### 3) ບັນດາການເລືອກຕັ້ງຂອງປະເທດຕ່າງໆ

**1. ການເລືອກຕັ້ງສະພາກໍາປູເຈຍ.**

ວັນທີ 25 ກຸມພາ 2024, ກໍາປູເຈຍ ໄດ້ດໍາເນີນການເລືອກຕັ້ງສະມາຊິກສະພາສູງ. ສະມາຊິກສະພາສູງຂອງກໍາປູເຈຍ ມີທັງໝົດ 62 ທີ່ນັ່ງ ແລະ ຈະມີອາຍຸການ 6 ປີ ຈຶ່ງຈະມີການເລືອກຕັ້ງໃໝ່, ໃນນັ້ນ ກະສັດແຕ່ງຕັ້ງບັ່ງຕົວ 2 ທີ່ນັ່ງ, ສະພາແຫ່ງຊາດແຕ່ງຕັ້ງ 2 ທີ່ນັ່ງ; ສ່ວນ 58 ທີ່ນັ່ງ ແມ່ນຈະໄດ້ຜ່ານການເລືອກຕັ້ງທົ່ວໄປ ໂດຍແມ່ນຈໍານວນສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາທ້ອງຖິ່ນ ເປັນຜູ້ໄປໃຊ້ສິດເລືອກຕັ້ງສະມາຊິກສະພາສູງດັ່ງກ່າວ, ເຊິ່ງການເລືອກຕັ້ງຄັ້ງນີ້ ມີສະມາຊິກສະພາແຫ່ງຊາດ 125 ທ່ານ ແລະ ສະມາຊິກສະພາທ້ອງຖິ່ນ 11,622 ທ່ານ, ລວມ 11,747 ທ່ານ ຈາກ 4 ພັກການເມືອງ (ພັກປະຊາຊົນກໍາປູເຈຍ, ພັກອຸດົມການຂະແມ, ພັກຟຸນຊິນເປັກ, ພັກພະລັງແຫ່ງຊາດ) ເຂົ້າຮ່ວມ. ຜົນການເລືອກຕັ້ງ, ພັກປະຊາຊົນກໍາປູເຈຍ ໄດ້ໄຊຊະນະ ຍາດໄດ້ 55 ທີ່ນັ່ງ; ພັກອຸດົມການຂະແມ ໄດ້ 3 ທີ່ນັ່ງ; ສ່ວນສອງພັກ ບໍ່ໄດ້ຈັກທີ່ນັ່ງ. ຜ່ານການເລືອກຕັ້ງດັ່ງກ່າວ, ທ່ານ ຮຸນເຊັນ ໄດ້ຮັບເລືອກຕັ້ງເປັນປະທານສະພາສູງຂອງກໍາປູເຈຍ ແລະ ມີສິດຮັກສາການປະມຸກລັດ ເມື່ອກະສັດມີອັນຈໍາເປັນຢູ່ພາຍໃນ ແລະ ໄປເຄື່ອນໄຫວຕ່າງປະເທດ.

**2. ການເລືອກຕັ້ງທົ່ວໄປອິນໂດເນເຊຍ.**

ວັນທີ 14 ກຸມພາ 2024, ມີປະຊາຊົນຫຼາຍກວ່າ 204 ລ້ານຄົນ ໃນຈໍານວນທັງໝົດ 270 ລ້ານຄົນ ຂອງອິນໂດເນເຊຍ ໄດ້ໄປໃຊ້ສິດເລືອກຕັ້ງປະທານາທິບໍດີ ແລະ ຮອງປະທານາທິບໍດີ, ສະມາຊິກລັດຖະສະພາ ແລະ ຜູ້ແທນທ້ອງຖິ່ນ. ຜົນການເລືອກຕັ້ງເບື້ອງຕົ້ນຢ່າງບໍ່ເປັນທາງການ, ທ່ານ Prabowo Subianto ຫົວໜ້າພັກແນວຮ່ວມອິນໂດເນເຊຍ (Gerindra Party), ລັດຖະມົນຕີກະຊວງປ້ອງກັນປະເທດ ໄດ້ຮັບຄະແນນສຽງ 58.39% ຊຶ່ງທ່ານ ເຄີຍເປັນຜູ້ບັນຊາການກໍາລັງພິເສດ ພາຍໃຕ້ການນໍາຂອງ ນາຍພົນ ຊູຮາໂຕ ແລະ ຜູ້ບັນາຊາການທະຫານພິເສດທີ່ເກັ່ງກ້າຂອງອິນໂດເນເຊຍ. ສ່ວນຄູ່ແຂ່ງ ທ່ານ Anies Baswedan ຈາກພັກ KPP ໄດ້ 25% ແລະ ທ່ານ Ganjar Pranowo ຈາກພັກ PDI-P, ຊຶ່ງເປັນພັກດຽວກັບປະທານາທິບໍດີອິນໂດເນເຊຍຄົນປັດຈຸບັນ ໄດ້ 17%.

**3. ການເລືອກຕັ້ງທົ່ວໄປປາກິດສະຖານ**

ປະກິດສະຖານ ໄດ້ຈັດການເລືອກຕັ້ງວັນທີ 8 ກຸມພາ 2024 ມີຜູ້ໄປໃຊ້ສິດເລືອກຕັ້ງເຖິງ 128 ລ້ານຄົນ, ເພື່ອເລືອກເອົາສະມາຊິກສະພາ 266 ບ່ອນນັ່ງ ໃນຈໍານວນບ່ອນນັ່ງທັງໝົດໃນລັດຖະສະພາ 336 ທີ່ນັ່ງ. ຜົນການເລືອກຕັ້ງພົບວ່າ: ຜູ້ສະໝັກອິດສະລະທີ່ໄດ້ຮັບການສະໜັບສະໜູນ ຈາກ ພັກ PTI ຂອງທ່ານ Imran Khan, ອະດີດນາຍົກລັດຖະມົນຕີປາກິດສະຖານ ສາມາດຍາດໄດ້ 102 ບ່ອນນັ່ງ; ທ່ານ Sharif ຈາກພັກ ສັນນິບາດມຸດສະລິມ PML-N ໄດ້ 73 ບ່ອນນັ່ງ; ທ່ານ Bilawal Bhutto, ຈາກພັກ ປະຊາຊົນປາກິດສະຖານ PPP ໄດ້ 54 ບ່ອນນັ່ງ. ນອກນີ້, ພັກຕ່າງໆຍັງຈະໄດ້ຮັບການຈັດສັນບ່ອນນັ່ງຕື່ມອີກຈາກ 70 ບ່ອນນັ່ງທີ່ສະຫງວນໃຫ້ແກ່ຜູ້ຍິງ ແລະ ຜູ້ບໍ່ແມ່ນຊາວມຸດສະລິມ. ພາຍຫຼັງການເລືອກຕັ້ງ, ພັກ PML-N ແລະ PPP ໄດ້ຖະແຫຼງການຈະຮ່ວມຈັດຕັ້ງລັດຖະບານ ໂດຍມີແຜນສະເໜີທ່ານ Shehbaz Sharif ເປັນນາຍົກລັດຖະມົນຕີ. ເຊິ່ງສອງພັກດັ່ງກ່າວກ່ອນໜ້ານີ້ໄດ້ຮ່ວມກັນໂຄ່ນລົ້ມທ່ານ Imran Khan ອອກຈາກອໍານາດໃນປີ 2022. ທ່ານ Imran Khan ແລະ ພັກຂອງທ່ານໄດ້ກ່າວວ່າ "ການເລືອກຕັ້ງໄດ້ຖືກຊັກຈູງໂດຍລັດຖະບານ ທີ່ມີຕາເວັນຕົກຢູ່ເບື້ອງຫຼັງ ແລະ ເປັນການເລືອກຕັ້ງທີ່ບໍ່ໂປ່ງໃສ".

**4. ການເລືອກຕັ້ງປະທານາທິບໍດີ ອາແຊກໄບຊານ**

ວັນທີ 7 ກຸມພາ 2024 ຜ່ານມາ, ທ່ານ Ilham Aliyev ໄດ້ຮັບໄຊຊະນະໃນການເລືອກຕັ້ງ ດ້ວຍຄະແນນ 92.12% ເປັນປະທານາທິບໍດີ ອາແຊກໄບຊານ (Azerbaijan) ສະໄໝທີ 5 ດ້ວຍວາລະອີກ 7 ປີ. ການເລືອກຕັ້ງຄັ້ງນີ້

ທ່ານໄດ້ຄະແນນຫຼາຍກວ່າຄັ້ງຜ່ານມາ, ເພາະໄດ້ຮັບຄະແນນສຽງສະໜັບສະໜູນ ຈາກທະຫານຂອງຕົນໃນເຂດ Nagorno-Karabakh ທີ່ເປັນເຂດຂັດແຍ້ງ ລະຫວ່າງ ອາກເມນີ ກັບ ອາແຊກໄບຊານ, ແຕ່ຄວາມຂັດແຍ້ງໄດ້ສິ້ນສຸດລົງ. ທ່ານ Aliyev ໄດ້ກ່າວວ່າ: ເປັນຄັ້ງທຳອິດທີ່ສາມາດຈັດການເລືອກຕັ້ງໃນເຂດຂັດແຍ່ງດັ່ງກ່າວໄດ້.

**5. ການກະກຽມການເລືອກຕັ້ງປະທານາທິບໍດີ ລັດເຊຍ**

ວັນທີ 8 ກຸມພາ 2024, ຄະນະກຳມະການເລືອກຕັ້ງ ໄດ້ປະກາດວ່າ ມີຜູ້ຮັບສະໝັກເລືອກຕັ້ງເປັນປະທານາທິບໍດີລັດເຊຍມີທັງໝົດ 4 ທ່ານ ຄື: ທ່ານ Leonid Slutsky ຈາກພັກເສລີປະຊາທິປະໄຕລັດເຊຍ (LDPR), ທ່ານ Vladislav Davankov, ຈາກພັກປະຊາຊົນໃໝ່; ທ່ານ Nikolay Kharitonov, ຈາກພັກກອມມູນິດສະຫະພັນລັດເຊຍ ແລະ ທ່ານ Vladimir Putin, ຈາກພັກລັດເຊຍເອກະພາບ, ປະທານາທິບໍດີລັດເຊຍ ຄົນປັດຈຸບັນ. ການເລືອກຕັ້ງປະທານາທິບໍດີສະຫະພັນລັດເຊຍຈະຈັດຂຶ້ນໃນວັນທີ 15-17 ມີນາ 2024. ຕາມສຽງຂອງປະຊາຊົນລັດເຊຍ ແລະ ຫຼາຍສຳນັກຂ່າວຂອງລັດເຊຍ ເປັນຕົ້ນ Sputnik News ໄດ້ໃຫ້ທັດສະນະວ່າ ທ່ານ Putin ຈະຊະນະການເລືອກຕັ້ງປະທານາທິບໍດີດັ່ງກ່າວ, ຊຶ່ງປັດຈຸບັນ ທ່ານ Putin ໄດ້ຮັບການສະໜັບສະໜູນຖານສຽງກວ່າ 80%.

**6. ການເລືອກຕັ້ງປະທານາທິບໍດີແຟງລັງ**

ການເລືອກຕັ້ງປະທານາທິບໍດີແຟງລັງ ຮອບທຳອິດ ໃນວັນທີ 28/01/2024 ບໍ່ມີຜູ້ໄດ້ຄະແນນສຽງ 50% ຂຶ້ນໄປຈຶ່ງໄດ້ຈັດການເລືອກຕັ້ງ ຮອບ 2 ຂຶ້ນ ໃນວັນທີ 11 ກຸມພາ 2024, ທ່ານ Alexander Stubb, ອະດີດນາຍົກລັດຖະມົນຕີແຟງລັງ, ຈາກພັກປະສົມແຫ່ງຊາດ(National Coalition), ຊຶ່ງແມ່ນພັກດຽວກັບປະທານາທິບໍດີຄົນປັດຈຸບັນ ໄດ້ຮັບຊະນະການເລືອກຕັ້ງ ດ້ວຍຄະແນນສຽງ ສຽງ 51.6% ໃນຂະນະທີ່ ທ່ານ Pekka Haavisto ໄດ້ຮັບຄະແນນສຽງ 48.4% ເຮັດໃຫ້ ທ່ານ Alexander Stubb ໄດ້ຮັບເລືອກເປັນປະທານາທິບໍດີ ຄົນທີ 13 ຂອງແຟັງລັງ.

**7. ການເລືອກຕັ້ງລັດຖະສະພາເບລາຣຸດຊີ**

ເບລາຣຸດຊີໄດ້ດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາທ້ອງຖິ່ນ, ວັນທີ 25 ກຸມພາ 2024 ຜ່ານມາ, ຜົນການເລືອກຕັ້ງ ພັກທີ່ໄດ້ຮັບຄະແນນສຽງສ່ວນໃຫຍ່ມີ: ພັກເບລາຍາ ຣຸດ, ພັກກອມມູນິດ, ພັກເສລີປະຊາທິປະໄຕ ແລະ ພັກແຮງງານແລະຄວາມຍຸຕິທຳ, ຊຶ່ງລ້ວນແຕ່ແມ່ນພັກທີ່ສະໜັບສະໜູນນະໂຍບາຍຂອງ ທ່ານ Lukashenko ປະທານາທິບໍດີ ເບລາຣຸດຊີ ຄົນປັດຈຸບັນ, ການເລືອກຕັ້ງຄັ້ງນີ້ ມີຜູ້ໄປປ່ອນບັດຫຼາຍກວ່າ 73% ຂອງຜູ້ມີສິດເລືອກຕັ້ງທັງໝົດ 6,9 ລ້ານຄົນ ທົ່ວປະເທດ, ຊຶ່ງມີ 110 ບ່ອນນັ່ງໃນສະພາແຫ່ງຊາດ, ໃນນັ້ນ ພັກເບລາຍາ ຣຸດຊຶ່ງເປັນພັກຂອງປະທານາທິບໍດີຄົນປັດຈຸບັນ ໄດ້ 51 ບ່ອນນັ່ງໃນສະພາແຫ່ງຊາດ ແລະ 12,514 ບ່ອນນັ່ງໃນສະພາທ້ອງຖິ່ນ. ຈາກໄຊຊະນະຢ່າງບໍ່ເປັນທາງການດັ່ງກ່າວ, ທ່ານ Alexander Lukashenko ໄດ້ປະກາດວ່າຈະລົງແຂ່ງຂັນເລືອກຕັ້ງປະທານນາທິບໍດີ ຂອງເບລາຣຸດຊີ ໃນປີ 2025, ຊຶ່ງປັດຈຸບັນ ທ່ານ ດຳລົງຕຳແໜ່ງປະທານາທິບໍດີ ສະໄໝທີ 6.

**8. ການເລືອກຕັ້ງ ປະທານາທິບໍດີ ແອນຊານວາດໍ(Elsalvador)**

ວັນທີ 04 ກຸມພາ 2024, ແອນຊານວາດໍ ຈັດການເລືອກຕັ້ງປະທານາທິບໍດີ ໂດຍມີປະຊາຊົນຜູ້ມີສິດເລືອກຕັ້ງໄດ້ປ່ອນບັດ 6,2 ລ້ານຄົນ ແລະ ມີຜູ້ສະໝັກຮັບເລືອກຕັ້ງທັງໝົດ 06 ທ່ານ, ຊຶ່ງຜົນການເລືອກຕັ້ງ ທ່ານ Nayib Bukele, ຫົວໜ້າພັກແນວຄິດໃໝ່, ປະທານາທິບໍດີແອນຊານວາດໍ ຄົນປັດຈຸບັນ ໄດ້ຮັບໄຊຊະນະດ້ວຍຄະແນນສຽງສະໜັບສະໜູນ 85% ແລະ ຈະດຳລົງຕຳແໜ່ງປະທານາທິບໍດີອີກວາລະໜຶ່ງ; ທ່ານ Manuel Flores, ຈາກພັກແນວໂຮມ (FMLN) ໄດ້ 07%; ສ່ວນຜູ້ສະໝັກຄົນອື່ນລວມກັນໄດ້ຄະແນນບໍ່ຮອດ 10%.

## 2. ຂ່າວພົ້ນເດັ່ນໃນພາກພື້ນ ແລະ ສາກົນ

### 1) ສະພາບປັ່ນອ້ອມຂໍ້ຂັດແຍ່ງອູແກຣນ-ລັດເຊຍ

ການໂຈມຕີລະຫວ່າງ ອູແກຣນ ແລະ ລັດເຊຍ ຍັງສືບຕໍ່ທະວີຄວາມຮຸນແຮງ ຢູ່ຫຼາຍພາກພື້ນຂອງອູແກຣນ, ໂດຍສະເພາະໃນ 04 ແຄວ້ນ ທີ່ໄດ້ລົງປະຊາມະຕິຂຶ້ນກັບລັດເຊຍ (Donetsk, Luhanks, Zaporizhia ແລະ Kherson); ເຊິ່ງ ລັດເຊຍ ສາມາດສະກັດໂດຣນຂອງອູແກຣນ ໄດ້ຫຼາຍກວ່າ 100 ລຳ. ນັບແຕ່ເກີດຄວາມຂັດແຍ່ງໃນວັນທີ 24/2/2022 ເປັນຕົ້ນມາ, ອູແກຣນ ສູນເສຍທະຫານຫຼາຍກວ່າ 440.000 ຄົນ. ປັດຈຸບັນ, ລັດເຊຍ ໄດ້ສຸມກຳລັງເຂົ້າທາງພາກໃຕ້ ແລະ ພາກຕາເວັນອອກຂອງອູແກຣນ, ສາມາດຍຶດເມືອງ Avdivka ໄດ້ຢ່າງສົມບູນ ໃນວັນທີ 17 ກຸມພາ 2024. ສ່ວນ ທ່ານ Volodymyr Zelenskyy, ປະທານາທິບໍດີອູແກຣນ ໄດ້ຕຳນິການຊ່ວຍເຫຼືອທີ່ຊັກຊ້າຂອງພັນທະມິດ, ເຖິງວ່າ EU ໄດ້ອະນຸມັດງົບປະມານຊ່ວຍເຫຼືອອູແກຣນ ທີ່ມີມູນຄ່າ 50 ລ້ານເອີໂຣ ໃນວັນທີ 01/02/2024, ແຕ່ການຈັດສົ່ງໄປໃຫ້ອູແກນ ຍັງຕ້ອງໃຊ້ເວລາພໍສົມຄວນ; ສ່ວນອາເມລິກາ ຍັງບໍ່ສາມາດອະນຸມັດງົບປະມານ 60 ລ້ານໂດລາ ຊ່ວຍເຫຼືອອູແກຣນໄດ້; ຍີ່ປຸ່ນກໍໄດ້ສັນຍາວ່າຈະໃຊ້ງົບ 15,8 ຕື້ເຢນ (106 ລ້ານ ໂດລາ) ເພື່ອຟື້ນຟູຄວາມເສຍຫາຍຈາກສົງຄາມໃນອູແກຣນ ; ການາດາ ຈະຊ່ວຍ 3.2 ຕື້ໂດລາ.

ຕວັກກີ ໄດ້ໃຫ້ສັດຕະຍາບັນຮັບຮອງຊູແອັດ ເຂົ້າເປັນສະມາຊິກນາໂຕ້ເພື່ອແລກກັບການທີ່ ອາເມລິກາ ຂາຍເຮືອບິນຮົບ F-16 ຈຳນວນ 40 ລຳ ໃຫ້ ຕວັກກີ ແລະ ໃນວັນທີ 26 ກຸມພາ 2024, ລັດຖະສະພາຮົງກາຣີ ໄດ້ລົງຄະແນນສຽງ ເພື່ອໃຫ້ຊູແອັດ ເຂົ້າຮ່ວມກັບນາໂຕ້ ແລະ ເປັນປະເທດສະມາຊິກທີ 32 ຂອງນາໂຕ້. ນອກຈາກນັ້ນ, ກຸ່ມນາໂຕ້ຍັງໄດ້ຝຶກຊ້ອມການທະຫານຄັ້ງໃຫຍ່ ແຕ່ວັນທີ 26 ກຸມພາ ຫາ ວັນທີ 7 ມີນາ 2024, ຈັດຂຶ້ນທີ່ປະເທດເຄັນຢາ, ທາງອັບຟຣິກາ ຕາເວັນອອກ ໂດຍການເຂົ້າຮ່ວມຂອງທະຫານ 1.000 ຄົນ ຈາກ 23 ປະເທດ

ທ່ານ Vladimir Putin, ປະທານາທິບໍດີລັດເຊຍ ໄດ້ໃຫ້ສຳພາດຕໍ່ສື່ຕາເວັນຕົກ (Tucker McNear Carlson ນັກຂ່າວອາເມຣິກາ) ຄັ້ງທຳອິດນັບແຕ່ເກີດຄວາມຂັດແຍ່ງ, ໂດຍມີເນື້ອໃນບາງຕອນກ່າວວ່າ ລັດເຊຍ ຈະຕໍ່ສູ້ເພື່ອຜົນປະໂຫຍດຂອງຕົນຈົນເຖິງທີ່ສຸດ, ການສູ້ຮົບໃນອຸແກຣນ ອາດຈົບລົງ ຖ້າປະເທດຕາເວັນຕົກຢຸດສົ່ງອາວຸດໃຫ້ກັບອຸແກຣນ ແລະ ຢືນຢັນວ່າ ລັດເຊຍ ບໍ່ມີຄວາມສົນໃຈຕໍ່ຄວາມຂັດແຍ່ງໃນວົງກວ້າງ ແລະ ດິນແດນອື່ນໆຂອງເອີຣົບ ແລະ ມີກໍລະນີດຽວເທົ່ານັ້ນທີ່ ລັດເຊຍ ຈະສົ່ງກຳລັງເຂົ້າໄປໃນ ໂປໂລຍ ກໍ່ຕໍ່ເມື່ອ ໂປໂລຍ ໂຈມຕີລັດເຊຍກ່ອນ.

### 2) ຂໍ້ຂັດແຍ່ງຢູ່ຕາເວັນອອກກາງ

ຄວາມຂັດແຍ່ງລະຫວ່າງ ອິດສະຣາແອນ ແລະ ປາແລັດສະຕິນ ນັບມື້ນັບຂະຫຍາຍອອກເປັນວົງກວ້າງ ທີ່ປະຊາຄົມໂລກ ຕິດຕາມຢ່າງໃກ້ຊິດ; ອິດສະຣາແອນ ສືບຕໍ່ໂຈມຕີທາງອາກາດ ແລະ ພາກພື້ນດິນໃສ່ເມືອງ Rafah ຂອງແຫຼມການຊາ . ນອກນັ້ນ, ອິດສະຣາແອນ ຍັງໂຈມຕີໃສ່ 3 ເມືອງທາງພາກໃຕ້ຂອງລີບັງ ແຕ່ວັນທີ 19 ກຸມພາ 2024 ເປັນຕົ້ນມາ ເພື່ອຕອບໂຕ້ກຸ່ມຮິດບອນເລາະ ໃນລີບັງ ທີ່ສະໜັບສະໜູນປາແລັດສະຕິນ. ສ່ວນກຸ່ມ Houthi ໃນເຢເມນ ໄດ້ໂຈມຕີບັນດາເຮືອສິນຄ້າຂອງອາເມຣິກາ ແລະ ພັດທະມິດຢ່າງຕໍ່ເນື່ອງ ແລະ ຮຸນແຮງກວ່າເກົ່າ, ພາຍຫຼັງທີ່ມີ ເຢຍລະມັນ, ຝຣັ່ງ, ເກຣັກ ແລະ ອິຕາລີ ເຂົ້າໄປປະຕິບັດການໂຈມຕີກຸ່ມຮູຕີຮ່ວມກັບ ອາເມຣິກາ ແລະ ອັງກິດ ທີ່ປະຈຳໃນບໍລິເວນດັ່ງກ່າວ ແຕ່ທ້າຍປີ 2023 ເປັນຕົ້ນມາ.

ສ່ວນຄວາມພະຍາຍາມຂອງນາໆຊາດ ເພື່ອຫາວິທີທາງຢຸດຍິງໃນແຫຼມກາຊາ ແມ່ນລົ້ມເຫຼວ ພາຍຫຼັງ ອາເມລິກາໄດ້ໃຊ້ສິດຄັດຄ້ານຮ່າງມະຕິຢຸດຍິງຖາວອນໃນກາຊາ ທີ່ປະເທດອານເຊຣີ ເປັນຜູ້ສະເໜີ ໃນກອງປະຊຸມສະພາຄວາມໝັ້ນ

ຄົງສະຫະປະຊາຊາດ ວັນທີ 20 ກຸມພາ 2024. ນອກນັ້ນ, ອາເມລິກາ ຍັງຈະເພີ່ມການຊ່ວຍເຫຼືອ ອິດສະຣາແອນ ໂດຍການຈັດສົ່ງລູກລະເບີດ ຈຳນວນ 3.000 ລູກໃຫ້ອິດສະຣາແອນ.

ວັນທີ 23 ກຸມພາ 2024, ໄດ້ມີການເຈລະຈາຮອບໃໝ່ກ່ຽວກັບສັນຍາຢຸດຍິງຢູ່ເຂດກາຊາໄດ້ຈັດຂຶ້ນຢູ່ນະຄອນຫຼວງປາຣີຂອງຝຣັ່ງ, ໂດຍມີຜູ້ຕາງໜ້າຈາກ ກາຕາ, ເອຢິບ ແລະ ອາເມລິກາ ຮ່ວມກັບຄະນະຜູ້ແທນອິດສະຣາແອນ ແຕ່ບໍ່ມີຜູ້ຕາງໜ້າຈາກຂະບວນການຕໍ່ຕ້ານຂອງປາແລັດສະຕິນ ຫຼື ກຸ່ມຮາມັດສ໌ເຂົ້າຮ່ວມການເຈລະຈາຄັ້ງນີ້. ໃນເບື້ອງຕົ້ນ ສະເໜີຈະຢຸດຍິງຊົ່ວຄາວ ໃນເທດສະການຖືສິນອົດຂອງຊາວມຸດສະລິມ ແລກກັບການປ່ອຍຕົວປະກັນອິດສະຣາແອນ 40 ຄົນ ແລະ ປ່ອຍນັກໂທດ ຮາມັສ 400 ຄົນ ຂະນະທີ່ກຸ່ມ ຮາມາສ ຍັງບໍ່ຕອບຕົກລົງ ແຕ່ວ່າປະກາດພ້ອມຈະເຈລະຈາກັບອິດສະຣາແອນ. ແນວໃດກໍ່ຕາມ, ເຖິງວ່າຈະມີຂໍ້ຕົກລົງຢຸດຍິງກັບກຸ່ມ ຮາມາສ ຫຼື ບໍ່ກໍ່ຕາມ, ອິດສະຣາແອນຍັງຄົງຢັ້ງຢືນ ຈະສືບຕໍ່ກວາດລ້າງກຸ່ມຮາມາສ ໂດຍຈະໂຈມຕີພາກພື້ນດິນຢ່າງເຕັມຮູບແບບໃນເມືອງ ຣາຟາ ຂອງກາຊ້າ ແລະ ອ້າງວ່າ ຈະອົບພະຍົບປະຊາຊົນປາແລັດສະຕິນ ຈາກເມືອງຣາຟາ ໄປຍັງຕອນເໜືອຂອງກາຊາ ແຕ່ທາງຕອນເໜືອກໍຖືກອິດສະຣາແອນໂຈມຕີຢ່າງໜັກກ່ອນໜ້ານີ້ແລ້ວ ເຮັດໃຫ້ອາຄານບ້ານເຮືອນຖືກທຳລາຍຫຼາຍກວ່າ 80% ຂອງພື້ນທີ່, ບໍ່ສາມາດຮອງຮັບຜູ້ອົບພະຍົບຫຼາຍກວ່າ 1 ລ້ານຄົນໄດ້.

### 3) ສະພາບແຫຼມເກົາຫຼີ

ວັນທີ 03 ກຸມພາ 2024, ທ່ານ ກິມ ເຈີງອຶນ, ຜູ້ນຳສູງສຸດ ສປປ ເກົາຫຼີ ໄດ້ລົງຢ້ຽມຢາມທ່າກຳປັ່ນເຮືອຮົບ ແລະ ຢ້ຽມຊົມການທົດລອງຍິງລູກສອນໄຟນຳວິຖີທີ່ຕິດຫົວຮົບຂະໜາດໃຫຍ່, ໄດ້ຮຽກຮ້ອງໃຫ້ເພີ່ມທະວີການສ້າງຄວາມເຂັ້ມແຂງໃຫ້ແກ່ກອງທັບເຮືອ, ປັບປຸງອຸດສາຫະກຳທີ່ທັນສະໄໝ, ຍົກລະດັບປົກປ້ອງອະທິປະໄຕ; ເພີ່ມທະວີການພັດທະນາເຮືອດຳນ້ຳພະລັງງານນິວເຄຼຍ, ຫົວຮົບຄວາມໄວເໜືອສຽງ, ດາວທຽມສອດແນມ, ລູກສອນໄຟ ແລະ ລະບົບຕໍ່ຕ້ານທາງອາກາດ.

ວັນທີ 26 ກຸມພາ 2024, ທ່ານ Shin Won-sik, ລັດຖະມົນຕີກະຊວງປ້ອງກັນປະເທດ ສ.ເກົາຫຼີ ໄດ້ພົບປະຫາລືກັບ Carlos Del Toro, ຜູ້ບັນຊາການກອງທັບເຮືອຂອງ ສ.ອາເມຣິກາ ທີ່ຢ້ຽມຢາມ ສ.ເກົາຫຼີ ກ່ຽວກັບສະຖານະການຄວາມໝັ້ນຄົງໃນແຫຼມເກົາຫຼີ, ການຮ່ວມມືໃນອຸດສາຫະກຳປ້ອງກັນປະເທດ ແລະ ບັນຫາ ສປປ ເກົາຫຼີ. ທ່ານ Shin ໄດ້ກ່າວວ່າ: ການຮັກສາທ່າທີການປ້ອງກັນແບບປະສົມປະສານທີ່ເຂັ້ມແຂງກັບ ສ.ອາເມຣິກາ ເພື່ອສະກັດກັ້ນການຍຸແຍ່ຂອງ ສປປ.ເກົາຫຼີ; ສຳລັບການປະຈຳການເຮືອດຳນ້ຳນິວເຄລຍຕິດລູກສອນໄຟຂອງອາເມລິກາ ເປັນຄັ້ງທຳອິດນັບແຕ່ປີ 1981 ເພື່ອຄວາມໝັ້ນຄົງຂອງ ສ.ເກົາຫຼີ. ນອກຈາກນີ້, ລັດຖະມົນຕີກະຊວງໂຮມຊາດ ສ.ເກົາຫຼີ ກ່າວວ່າ ການທີ່ ສປປ ເກົາຫຼີ ຮື້ຖອນອານຸສາວະລີ ທີ່ເປັນສັນຍາລັກຂອງຄວາມພະຍາຍາມໃນການໂຮມຊາດນັ້ນ ອາດເຮັດໃຫ້ເກີດຄວາມສັບສົນທາງອຸດົມການ ຫຼື ເກີດຄວາມສັບສົນໃນຊົນຊັ້ນສູງຂອງ ສປປ ເກົາຫຼີ ແລະ ຖ້າເກີດຄວາມຂັດແຍ່ງພາຍໃນ ມີຄວາມເປັນໄປໄດ້ສູງທີ່ ສປປ ເກົາ ຫຼີ ຈະດຳເນີນການຍຸແຍ່ທາງທະຫານ ເພື່ອເອົາຊະນະວິກິດການ.

### 4) ສະພາບການພາຍໃນຂອງບາງປະເທດອາຊຽນ

- ສະພາບຄວາມບໍ່ສະຫງົບຢູ່ມຽນມາ ຍັງສືບຕໍ່ມີຂຶ້ນເປັນໄລຍະ ແຕ່ບາງຂົງເຂດໄດ້ມີການຢຸດຍິງຊົ່ວຄາວລະຫວ່າງກອງທັບມຽນມາ ແລະ ກອງກຳລັງຊົນເຜົ່າສ່ວນນ້ອຍ. ຂະນະທີ່, ກອງທັບມຽນມາ ສຸມໃສ່ການໂຈມຕີທາງພື້ນດິນ ແລະ ທາງອາກາດ ເພື່ອຍຶດຄືນບາງພື້ນທີ່ເປັນຕົ້ນບາງເມືອງ ຢູ່ ລັດ Shan ແລະ ລັດ Kayah ທີ່ຖືກກອງກຳລັງຊົນເຜົ່າສ່ວນນ້ອຍຍຶດຄອງຢູ່. ພ້ອມກັນນັ້ນ, ຄະນະກຳມະການປ້ອງກັນປະເທດ ແລະ ຄວາມໝັ້ນຄົງມຽນມາ ໄດ້ຂະຫຍາຍມາດຕະການສຸກເສີນອອກຕື່ມອີກ 06 ເດືອນ ແລະ ທາງການມຽນມາ ໄດ້ປະກາດໃຊ້ກົດໝາຍວ່າດ້ວຍການທະຫານປະຊາ

ຊິນ ທີ່ມີຜົນບັງຄັບໃຊ້ແຕ່ ວັນທີ 10 ກຸມພາ 2024 ເປັນຕົ້ນໄປ ໂດຍກຳນົດໃຫ້ ເພດຊາຍອາຍຸ 18-35 ປີ, ເພດຍິງ ອາຍຸ 18-27 ປີ ສາມາດເຂົ້າຮັບການເກນທະຫານໄດ້, ຖ້າຫາກຝ່າຝືນຈະຖືກຈຳຄຸກ 5 ປີ. ພາຍໃຕ້ກົດໝາຍດັ່ງກ່າວ, ເຮັດໃຫ້ຊາວໜຸ່ມມຽນມາ ພາກັນຫຼັ່ງໄຫຼເຂົ້າລາຊະອານາຈັກໄທ ຫຼາຍຜິດປົກກະຕິ. ໃນນັ້ນ, ວັນທີ 20 ກຸມພາ 2024, ທ່ານ ປານປຣີ ມະຫິດທານຸກອນ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການຕ່າງປະເທດໄທ ກ່າວວ່າ: ລັດຖະບານໄທ ຈະຕັ້ງສູນປະສານງານເພື່ອໃຫ້ການຊ່ວຍເຫຼືອດ້ານມະນຸດສະທຳແກ່ຊາວມຽນມາ ທີ່ຫຼົບໜີຈາກຄວາມບໍ່ສະຫງົບໃນປະເທດມຽນມາ ເຂົ້າໄປທີ່ເຂດຊາຍແດນຂອງໄທ ໃຫ້ສຳເລັດພາຍໃນເດືອນ ມີນາ 2024. ການຕັ້ງສູນດັ່ງກ່າວ ເປັນໄປຕາມມະຕິຕົກລົງໃນກອງປະຊຸມລັດຖະມົນຕີການຕ່າງປະເທດຂອງອາຊຽນທີ່ນະຄອນຫຼວງພະບາງ ໃນລະຫວ່າງ ວັນທີ 28-29 ມັງກອນ 2024 ຜ່ານມາ ຊຶ່ງເປັນໜຶ່ງໃນການຈັດຕັ້ງປະຕິບັດ ມະຕິ 5 ຂໍ້ ຂອງອາຊຽນທີ່ມີຕໍ່ສະຖານະການໃນມຽນມາ.

- ໃນລະຫວ່າງການຢ້ຽມຢາມລາຊະອານາຈັກໄທ ຂອງ ທ່ານ ຮຸນ ມາເນັດ, ນາຍົກລັດຖະມົນຕີ ກຳປູເຈຍ ວັນທີ 7 ກຸມພາ 2024, ທ່ານ ເສດຖາ ທະວີສິນ, ນາຍົກລັດຖະມົນຕີໄທ ແລະ ທ່ານ ຮຸນ ມາເນັດ ໄດ້ເປັນສັກຂີພິຍານໃນພິທີລົງນາມ ຮ່ວມມືດ້ານການຄ້າ ແລະ ການລົງທຶນຂອງໄທ ແລະ ກຳປູເຈຍ, ເພື່ອແນໃສ່ເພີ່ມທະວີການຮ່ວມມືດ້ານການຄ້າ ການລົງທຶນ, ການທ່ອງທ່ຽວ ແລະ ພັດທະນາເຂດຊາຍແດນ, ໂດຍເນັ້ນໜັກເປັນ ພິເສດເຖິງພື້ນຖານເສດຖະກິດຂຽວ ແລະ ເສດຖະກິດດີຈີຕອນ.

### 5) ກອງປະຊຸມສຸດຍອດຂອງສະຫະພາບອາຟຣິກາ(African Union :AU) ຄັ້ງທີ 37

ກອງປະຊຸມສຸດຍອດຂອງ AU ຈັດຂຶ້ນ ໃນວັນທີ 18-19 ກຸມພາ 2024, ທີ່ນະຄອນຫຼວງ Addis Ababa, ປະເທດ ເອທິໂອເປຍ ມີ 55 ອົງການຈັດຕັ້ງເຂົ້າຮ່ວມ, ພາຍໃຕ້ຄຳຂວັນ "ໃຫ້ຄວາມຮູ້ແກ່ຊາວອາຟຣິກາໃນສະຕະວັດທີ 21: ລະບົບການສຶກສາທີ່ສາມາດເຂົ້າເຖິງ, ຮຽນຮູ້ແບບຮອບດ້ານ, ມີຄຸນນະພາບ ແລະ ການຮຽນຮູ້ທີ່ກ່ຽວຂ້ອງໃນອາຟຣິກາ'. ກອງປະຊຸມໄດ້ຮັບຮອງເອົາແຜນການປະຕິບັດງານ 10 ປີຄັ້ງທີ 2 (2024-2033) ຂອງວາລະປີ 2063, ທີ່ເອີ້ນວ່າ "ທົດສະວັດແຫ່ງການເລັ່ງລັດ" . ກອງປະຊຸມໄດ້ຮັບຮອງຍຸດທະສາດການສຶກສາຂອງອາຟຣິກາ(CESA) 12 ຂໍ້. ກອງປະຊຸມໄດ້ຮ່ວມປະນາມການປິດລ້ອມທາງເສດຖະກິດ, ການເງິນ ແລະ ການຄ້າຂອງອາເມລິກາຕໍ່ກູບາເປັນເວລາຫຼາຍກວ່າ 6 ທົດສະວັດ. ພ້ອມນີ້, ກອງປະຊຸມຍັງໄດ້ເລືອກຕັ້ງ ທ່ານ Mohamed Ould Cheikh Ghazouani, ປະທານາທິບໍດີຂອງປະເທດ Mauritania, ເປັນປະທານ AU ສຳລັບປີ 2024, ໂດຍໄດ້ຮັບຕຳແໜ່ງຕໍ່ຈາກທ່ານ Azali Assoumani, ປະທານາທິບໍດີ ຂອງປະເທດ Comoros.

## II. ການເຄື່ອນໄຫວວຽກງານ ຂອງການນຳຂັ້ນສູງ ພັກ ປປ ລາວ ແລະ ຄະນະນຳ ຄຕພ.

### 1) ເສີມຂະຫຍາຍມູນເຊື້ອອັນດີງາມ, ສືບຕໍ່ເພີ່ມພູນຄູນສ້າງ ແລະ ເພີ່ມທະວີສາຍພົວພັນສາມັກຄີພິເສດ ລາວ-ຫວຽດນາມ.



ໃນວັນທີ 26 ກຸມພາ 2024, ຢູ່ນະຄອນຫລວງຮ່າໂນ້ຍ ສສ ຫວຽດນາມ ໄດ້ມີການພົບປະຂັ້ນສູງ ລະຫວ່າງ ພັກປະຊາຊົນ ປະຕິວັດລາວ ແລະ ພັກກອມມູນິດຫວຽດນາມ ໂດຍການເປັນປະທານຮ່ວມຂອງ ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກ ປະຊາຊົນ ປະຕິວັດລາວ ແລະ ສະຫາຍ ຫງວຽນ ຝູ້ຈ້ອງ ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ.

ການພົບປະຄັ້ງນີ້ ເປັນການເພີ່ມທະວີສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ໃຫ້ເລິກເຊິ່ງກວ່າເກົ່າ, ຕີລາຄາຄືນກ່ຽວກັບຜົນສຳເລັດຂອງການຮ່ວມມື ລະຫວ່າງ ສອງພັກ, ສອງລັດ ໃນໄລຍະຜ່ານມາ, ເປັນເອກະພາບກ່ຽວກັບບັນດາທິດທາງໃຫຍ່ສຳຄັນ ໃນບັນດາຂົງເຂດຂອງການພົວພັນຮ່ວມມືໃນຕໍ່ໜ້າ; ສືບຕໍ່ການເພີ່ມທະວີການພົວພັນທາງດ້ານການເມືອງ, ການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ການຮ່ວມມືດ້ານເສດຖະກິດ, ວັດທະນະທຳ, ສຶກສາ, ວິທະຍາສາດ-ເຕັກໂນໂລຊີ. ສອງຝ່າຍ ໄດ້ເນັ້ນໜັກເຖິງ ປະຫວັດສາດ, ການພົວພັນຮ່ວມມື ທີ່ສະໜິດແໜ້ນ ເປັນມູນເຊື້ອມາແຕ່ດົນນານ ແລະ ການຊ່ວຍເຫລືອ ເຊິ່ງກັນ ແລະ ກັນ ຂອງສອງຝ່າຍ, ຢືນຢັນວ່າ ສາຍພົວພັນລາວ-ຫວຽດນາມ ເປັນມໍລະດົກອັນລ້ຳຄ່າຂອງສອງຊາດ, ເປັນປັດໄຈພາວະວິໄສ, ເປັນກົດເກນປະຫວັດສາດ ແລະ ເປັນກຳລັງແຮງອັນໃຫຍ່ຫລວງຂອງ ສອງພັກ, ສອງລັດ ທີ່ຕ້ອງໄດ້ຮັບການເສີມຂະຫຍາຍ, ສິ່ງຕໍ່ໃຫ້ບັນດາຄົນຮຸ່ນໜຸ່ມຕໍ່ໄປ.

ສອງຝ່າຍ ເຫັນດີເສີມຂະຫຍາຍບັນດາກົນໄກທີ່ມີຢູ່ໃນປັດຈຸບັນ ໃຫ້ມີປະສິດທິຜົນ, ສືບຕໍ່ປັບປຸງແປງໃໝ່ຍົກສູງບັນດາໝາກຜົນການຮ່ວມມືໃນບັນດາຂະແໜງຕ່າງໆ, ພ້ອມນັ້ນ ຕ້ອງສ້າງບັນດາກົນໄກໃໝ່ທີ່ແທດເໝາະ ແນໃສ່ເພີ່ມທະວີການພົວພັນ ລາວ-ຫວຽດນາມ ເພື່ອຜົນປະໂຫຍດທີ່ແທ້ຈິງຂອງປະຊາຊົນສອງຊາດ, ເພື່ອສັນຕິພາບການຮ່ວມມື ເພື່ອການພັດທະນາຢູ່ໃນພາກພື້ນ ແລະ ສາກົນ.

**2) ພັກ-ລັດຖະບານ ແຫ່ງ ສປປ ລາວ ໄດ້ປະດັບຫຼຽນຍ້ອງຍໍໃຫ້ແກ່ບຸກຄົນ ແລະ ກົມກອງລວມໝູ່ ຂອງກະຊວງ ປ້ອງກັນປະເທດຫວຽດນາມ**



ໃນວັນທີ 25 ກຸມພາ 2024, ຢູ່ສະຖານເອກອັກຄະລັດຖະທູດ ສປປ ລາວ ທີ່ນະຄອນຫຼວງຮ່າໂນ້ຍ,ສສ ຫວຽດນາມ, ພັກ-ລັດ ແຫ່ງ ສປປ ລາວ ໄດ້ປະດັບຫຼຽນຍ້ອງຍໍໃຫ້ແກ່ບຸກຄົນ ແລະ ກົມກອງລວມໝູ່ ໃຫ້ແກ່ ກົມກອງ ແລະ ບຸກຄົນຂອງ ຄະນະຮັກສາ, ເບິ່ງແຍງສຸຂະພາບພະນັກງານສູນກາງ ແລະ ໂຮງໝໍສູນກາງກອງທັບ 108, ກະຊວງ ປ້ອງກັນປະເທດຫວຽດນາມ. ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນ ຕ່າງປະເທດສູນກາງພັກ ປະຊາຊົນ ປະຕິວັດລາວ ໄດ້ຕາງໜ້າໃຫ້ ພັກ ແລະ ລັດຖະບານ ແຫ່ງ ສປປ ລາວ ປະດັບຫຼຽນ ໄຊອິດສະຫຼະຊັ້ນ III ໃຫ້ແກ່ 2 ກົມກອງ, ບຸກຄົນ 1 ສະຫາຍ; ປະດັບຫຼຽນໄຊມິດຕະພາບ ໃຫ້ແກ່ 2 ກົມກອງ, ບຸກຄົນ 3 ສະຫາຍ ແລະ ປະດັບຫຼຽນກາມິດຕະພາບ ໃຫ້ແກ່ ບຸກຄົນ 2 ສະຫາຍ.

**3) ຄະນະຜູ້ແທນ ພັກ ປປ ລາວ ເຂົ້າຮ່ວມກອງປະຊຸມເວທີປຶກສາຫາລື ຂອງບັນດາຝ່າຍສະໜັບສະໜູນການຕໍ່ສູ້ຕ້ານ ການປະຕິບັດໃນສະໄໝໃໝ່ ຂອງລັດທິລ່າເມືອງຂຶ້ນແບບໃໝ່**




ຄະນະຜູ້ແທນພັກ ປປ ລາວ ນຳໂດຍ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະ ພົວພັນຕ່າງປະເທດສູນກາງພັກ ໄດ້ເຂົ້າຮ່ວມກອງປະຊຸມເວທີປຶກສາຫາລືຂອງບັນດາຝ່າຍສະໜັບສະໜູນການຕໍ່ສູ້ຕ້ານ

ການປະຕິບັດໃນສະໄໝໃໝ່ ຂອງລັດທິລ່າເມືອງຂຶ້ນແບບໃໝ່, ພາຍໃຕ້ຫົວຂໍ້: "ເພື່ອເສລີພາບ ຂອງບັນດາຊາດ" (For the Freedom of Nations), ເຊິ່ງໄດ້ຈັດຂຶ້ນໃນວັນທີ 14-17 ກຸມພາ 2024, ທີ່ນະຄອນຫຼວງມົດສະກູ, ສະຫະພັນລັດເຊຍ, ໂດຍການເປັນເຈົ້າພາບຂອງພັກລັດເຊຍເອກະພາບ, ມີຄະນະຜູ້ແທນຈາກພັກການເມືອງ ຫຼາຍກວ່າ 60 ພັກ ຈາກ 50 ກວ່າປະເທດໃນຂົງເຂດອາຊີ, ອາຟຣິກາ, ອາເມລິກາລາຕິນ ແລະ ເອີຣົບ ເຂົ້າຮ່ວມ.

ກອງປະຊຸມເວທີປຶກສາຫາລືດັ່ງກ່າວ ໄດ້ຈັດຂຶ້ນເປັນຄັ້ງທຳອິດ ມີເປົ້າໝາຍຕໍ່ສູ້ຕ້ານລັດທິລ່າເມືອງຂຶ້ນແບບໃໝ່ ກໍຄື ອະດີດປະເທດລ່າຫົວເມືອງຂຶ້ນ ທີ່ເວລາໃດກໍ່ພະຍາຍາມຮັກສາການຄອບງຳໂລກ ເພື່ອຜົນປະໂຫຍດຂອງພວກເຂົາ ໂດຍບໍ່ຄຳນຶງເຖິງບັນດາປະເທດສ່ວນໃຫຍ່ຂອງໂລກ ໂດຍສະເພາະບັນດາປະເທດກຳລັງພັດທະນາ, ເຊິ່ງເປັນການບັ່ນທອນເອກະລາດ, ອຳນາດອະທິປະໄຕ, ສິດທິໃນການປົກຄອງຕົນເອງຂອງປະຊາຊົນ ຢູ່ປະເທດຕ່າງໆ ແລະ ກໍ່ໃຫ້ເກີດຄວາມບໍ່ສະເໝີພາບ ແລະ ບໍ່ຍຸຕິທຳໃນໂລກ, ຊຶ່ງໄດ້ຍົກໃຫ້ເຫັນພື້ນຖານ ແລະ ບັນດາຮູບການປະຕິບັດໃນສະໄໝໃໝ່ ຂອງລັດທິລ່າເມືອງຂຶ້ນແບບໃໝ່ ແລະ ແນວທາງ, ມາດຕະການໃນການຕ້ານການປະຕິບັດໃນສະໄໝໃໝ່ ຂອງລັດທິລ່າເມືອງຂຶ້ນແບບໃໝ່ ໂດຍສະເພາະໃນຂົງເຂດການເມືອງ, ກົດໝາຍ, ເສດຖະກິດ, ການເງິນ, ຂໍ້ມູນຂ່າວສານ ແລະ ມະນຸດສະທຳ (ການສຶກສາ, ວິທະຍາສາດ, ວັດທະນະທຳ, ການແພດ, ກິລາ ແລະ ອື່ນໆ).

ພັກ ປປ ລາວ ສະໜັບສະໜູນຂໍ້ລິເລີ່ມ ຂອງພັກລັດເຊຍເອກະພາບ ໃນການສ້າງຕັ້ງກົນໄກປຶກສາຫາລືຄັ້ງນີ້ ແລະ ໄດ້ຍົກໃຫ້ເຫັນແນວທາງນະໂຍບາຍຂອງ ພັກ-ລັດ ສປປ ລາວ ທີ່ຄັດຄ້ານທຸກຮູບແບບ ຂອງການປະຕິບັດໃນສະໄໝໃໝ່ ຂອງລັດທິລ່າເມືອງຂຶ້ນແບບໃໝ່ ທີ່ຂັດກັບທ່າອ່ຽງ ຂອງຍຸກສະໄໝ, ການປົກປັກຮັກສາອຳນາດອະທິປະໄຕ ແລະ ຄວາມເປັນເອກະລາດແຫ່ງຊາດ, ການຍົກສູງບົດບາດ ແລະ ເພີ່ມທະວີຄວາມສາມັກຄີກັນ ຂອງບັນດາພັກການເມືອງ; ພັກ ປປ ລາວ ຈະຮ່ວມກັບພັກລັດເຊຍເອກະພາບ ແລະ ພັກການເມືອງບັນດາປະເທດຈາກພາກພື້ນຕ່າງໆຂອງໂລກ ເພື່ອສືບຕໍ່ຂະບວນການເພື່ອເສລີພາບ ຂອງບັນດາຊາດ. ກອງປະຊຸມໄດ້ອອກຖະແຫຼງການຮ່ວມ ແລະ ການສ້າງຕັ້ງຄະນະປະຈຳ ຂອງກອງປະຊຸມເວທີປຶກສາຫາລືດັ່ງກ່າວ.

### 4) ຄະນະນຳ ຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າອວຍພອນສະຖານເອກອັກຄະລັດຖະທູດແຫ່ງ ສສ ຫວຽດນາມ ປະຈຳ ສປປ ລາວ



ເນື່ອງໃນໂອກາດ ວັນສ້າງຕັ້ງພັກກອມມູນິດຫວຽດນາມ ຄົບຮອບ 94 ປີ (3/2/1930–3/2/2024) ແລະ ບຸນປີໃໝ່ປະຈຳຊາດຫວຽດນາມ, ວັນທີ 31 ມັງກອນ 2024 ຜ່ານມາ, ສະຫາຍ ວາລະໄຊ ເລັ່ງສະຫວັດ, ຮອງຫົວໜ້າ

ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ນຳພາຄະນະເຂົ້າອວຍພອນ ສະຫາຍ ເອກອັກຄະລັດຖະທູດ ຫງວຽນບ່າຮຸ່ງ ແລະ ພະນັກງານສະຖານທູດ ແຫ່ງ ສສ ຫວຽດນາມ ປະຈຳ ສປປ ລາວ. ໂອກາດດັ່ງກ່າວ, ສະຫາຍ ຍັງໄດ້ສົ່ງສານອວຍພອນວັນສ້າງຕັ້ງ ພັກກອມມູນິດຫວຽດນາມ ແລະ ອວຍພອນ ປີໃໝ່ ຫວຽດນາມ ຂອງຄະນະບໍລິຫານງານສູນກາງພັກ ປປ ລາວ ເຖິງ ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ແລະ ສານອວຍພອນ ຈາກ ຫົວໜ້າ ຄຕພ ລາວ ເຖິງ ຫົວໜ້າ ຄຕພ ຫວຽດນາມ ຜ່ານສະຖານທູດ.

## III. ການເຄື່ອໄຫວວຽກງານ ຂອງສາມອົງການຈັດຕັ້ງມະຫາຊົນ ຄຕພ.

### ຄະນະພົວພັນຕ່າງປະເທດສູນກາງພັກ ເຜີຍແຜ່ເຊື່ອມຊຶມວັນສ້າງຕັ້ງສະຫະພັນກຳມະບານລາວ ຄົບຮອບ 68 ປີ.




ວັນທີ 29 ກຸມພາ 2024, ຄະນະພົວພັນຕ່າງປະເທດສູນກາງພັກ (ຄຕພ) ໄດ້ຈັດປາຖະກະຖາເຊື່ອມຊຶມເອກະສານ ຄື:ວັນສ້າງຕັ້ງສະຫະພັນກຳມະບານລາວ ຄົບຮອບ 68 ປີ ໂດຍການເປັນ ປະທານຂອງສະຫາຍ ວາລະໄຊ ເລັ່ງສະຫວັດ, ກຳມະການຄະນະພັກ, ປະທານກວດກາ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ແລະ ຄະນະບໍລິຫານງານສະຫະພັນກຳມະບານ ຄຕພ ຕະຫຼອດຮອດສະມາຊິກກຳມະບານ ທົ່ວຄະນະພົວພັນຕ່າງປະເທດສູນກາງພັກເຂົ້າຮ່ວມ.

ສະຫາຍ ເກີລໍ່ ຢ່າງກໍ່, ກຳມະການຄະນະພັກ ຄຕພ, ກຳມະການຄະນະບໍລິຫານງານສູນກາງສະຫະພັນກຳມະບານລາວ, ປະທານສະຫະພັນກຳມະບານ ຄຕພ, ໄດ້ຍົກໃຫ້ເຫັນການກຳເນີດ ການເຕີບໃຫຍ່ຂະຫຍາຍຕົວ ແລະ ມູນເຊື້ອປະຕິວັດ, ຜົນງານປະກອບສ່ວນໃນພາລະກິດຕໍ່ສູ້ປົດປ່ອຍຊາດ ກໍຄືພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ; ປຸກລະດົມການປະຕິບັດຂໍ້ແຂ່ງຂັນ 5 ເປັນເຈົ້າ ຕິດພັນກັບຂໍ້ແຂ່ງຂັນ “ຮັກຊາດ ແລະ ພັດທະນາ” ໃຫ້ເປັນຂະບວນການກວ້າງ ຂວາງ ແລະ ຟົດຟື້ນກວ່າເກົ່າ. ພ້ອມກັນນັ້ນ, ສະຫາຍ ຍັງໄດ້ຍົກໃຫ້ເຫັນເຖິງພາລະບົດບາດຂອງສະຫະພັນກຳມະບານລາວ ໃນໄລຍະໃໝ່ ຕໍ່ການປະກອບສ່ວນເຂົ້າໃນການປຸກລະດົມຂົນຂວາຍ, ສຶກສາອົບຮົມສະມາຊິກກຳມະບານ, ກຳມະກອນ ແລະ ຊາວມຜູ້ອອກແຮງງານລາວ ໃຫ້ເປັນເຈົ້າການປົກປັກຮັກສາ ແລະ ພັດທະນາປະເທດຊາດ ກ້າວຂຶ້ນສູ່ຈຸດໝາຍສັງຄົມນິຍົມ ຕາມແນວທາງນະໂຍບາຍຂອງພັກ ໃນວັນດຽວກັນ ກໍ່ໄດ້ມີການຖາມ-ຕອບ ຄວາມຮູ້ກ່ຽວກັບ ປະທານຄຳໄຕ ສີພັນດອນ ໃນໂອກາດສະເຫຼີມສະຫຼອງວັນເກີດຂອງເພິ່ນ ຄົບຮອບ 100 ປີ.